ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 2004009 /ມຫທຊ

ນະຄອນຫຼວງວຽງຈັນ, ວັນທີ: 09 APR 2020

# ໜັງສືຊີ້ແຈງ

**ຮຽນ**: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ;
ບັນດາຜູ້ຖືຮຸ້ນ ມຫທຊ, ນັກລົງທຶນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.

**ເລື່ອງ**: ຊີ້ແຈງເອກະສານຄັດຕິດ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019;
- ອີງຕາມລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ, ສະບັບເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມມະຕິກອງປະຊຸມສະພາບໍລິຫານຄັ້ງທີ 2/2020, ສະບັບເລກທີ 2003018/ມຫທຊ, ລົງວັນທີ 14 ມີນາ 2020;
- ອີງຕາມໜັງສືເຊີນປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019, ສະບັບເລກທີ 2004002/ມຫທຊ, ລົງວັນທີ 3 ເມສາ 2020

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດຊີ້ແຈງມາຍັງທ່ານເພື່ອຊາບ ກ່ຽວກັບ ເອກະສານຄັດຕິດ ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 (ວາລະທີ 5) ພິຈາລະນາ ແລະ ອະນຸມັດ ການຈັດສັນຫາກຳໄລສຸດທິປີ 2019 ແລະ ວິທີແບ່ງເງິນປັນຜົນ ສະບັບພາສາລາວ ທີ່ບໍລິສັດ ໄດ້ເປີດເຜີຍຂໍ້ມູນ ໄປໃນວັນທີ 03 ເມສາ 2020 ເຊິ່ງມີຂໍ້ຜິດພາດໃນການລະບຸຕົວເລກເງິນປັນຜົນຕໍ່ຮຸ້ນທີ່ບໍ່ກົງກັບການແຈ້ງມະຕິສຳ ຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 2/2020 ຄັ້ງວັນທີ 14 ມີນາ 2020. ພ້ອມດຽວກັນນີ້ ກໍ່ໄດ້ຄັດຕິດ ເອກະສານຄັດຕິດ ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ສະບັບພາສາລາວ (ໃໝ່) ມາພ້ອມນີ້.

ດັ່ງນັ້ນ, ຈຶ່ງໄດ້ຊີ້ແຈງມາຍັງບັນດາທ່ານເພື່ອຮັບຊາບ.

ຜູ້ອຳນວຍການໃຫຍ່

(ທ່ານ ນາມ ຕຣີລິດວິໄລ)

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

## ເອກະສານຄັດຕິດ ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2019

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019
2. ໃບມອບສິດ
3. <u>ເອກະສານປະກອບວາລະທີ 1:</u> ລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ ທີ່ຜ່ານມາ
4. <u>ເອກະສານປະກອບວາລະທີ 2 ແລະ 6:</u> ບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ, ລາຍງານ ປະຈຳປີ 2019 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2020
5. <u>ເອກະສານປະກອບວາລະທີ 3:</u> ເອກະສານລາບງານການເງິນຂອງບໍລິສັດ ປະຈຳປີ 2019
6. ຄຳແນະນຳກ່ຽວກັບການລົງຄະແນນສຽງ
7. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
8. ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ
9. ແຜນທີ່ຂອງສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ

**ໝາຍເຫດ**

1. ຜູ້ຖືຮຸ້ນທຸກທ່ານຕ້ອງໄດ້ນຳເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 3 ເມສາ 2020 ຢູ່ ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງ ໄຊເສດຖາ, ນະຄອນຫຼວງ ວຽງຈັນ, ໂທລະສັບ: (856-20) 454361-4, ແຟັກ: (856-21) 454361-4
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ກໍລະນີເປັນຄົນຕ່າງປະເທດ) ມາສະເໜີຕົວເພື່ອເຂົ້າຮ່ວມກອງປະຊຸມ
3. ຖ້າຫາກທ່ານບໍ່ສະດວກທີ່ໄປຮ່ວມກອງປະຊຸມດ້ວຍຕົນເອງ ຈະມອບສິດໃຫ້ບຸກຄົນອື່ນໄປເຂົ້າຮ່ວມແທນກໍ່ໄດ້ ໂດຍມອບສິດໃຫ້ຕາມແບບທີ່ຄັດຕິດມາພ້ອມໜັງສືສະບັບນີ້ ແລະ ນຳມາມອບໃຫ້ປະທານກອງປະຊຸມ ຫຼື ຜູ້ທີ່ປະທານກອງປະຊຸມມອບໝາຍ ຊຶ່ງຜູ້ໄດ້ຮັບມອບສິດຕ້ອງໄດ້ນຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ກໍລະນີເປັນຄົນຕ່າງປະເທດ) ມາສະເໜີຕົວເພື່ອເຂົ້າຮ່ວມກອງປະຊຸມ
4. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ສະມາຊິກສະພາບໍລິຫານອິດສະຫຼະຂອງບໍລິສັດ ເຂົ້າຮ່ວມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດດັ່ງກ່າວ ແລະ ໝາຍ (✔) ເພື່ອເລືອກເອົາສະພາບໍລິຫານອິດສະຫຼະຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານຄັດຕິດນັ້ນ ສົ່ງເຖິງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ, ຖະໜົນ ໄກສອນພົມວິຫານ, ບ້ານ ໂພນພະເນົາ ກມ5, ເມືອງ ໄຊເສດຖາ,ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6 ແລະ ກະລຸນາສົ່ງເຖິງບໍລິສັດກ່ອນ ວັນທີ 14 ເມສາ 2020
5. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສິດ ລວມທັງລາຍລະອຽດໃນໜັງຊີເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມທ່ານ ນາງ ເດືອນເພັນ ສີປະມວນ , ໂທ: (856-20) 96380881

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

**ວາລະທີ 1** **ພິຈາລະນາຮັບຮອງລາຍງານກອງປະຊຸມສາມັນຜູ້ຖືປະຈຳປີໃນຄັ້ງທີ່ຜ່ານມາ**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ລາຍງານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີທີ່ຜ່ານມາ ເມື່ອວັນທີ 28 ເມສາ 2019 ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນສຳເລັດໃນກອງປະຊຸມ ດັ່ງກ່າວຕາມເອກະສານຄັດຕິດ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາລາຍງານການປະຊຸມຜູ້ຖືຮຸ້ນປະຈຳປີທີ່ຜ່ານມາ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 2** **ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ ແລະ ລາຍງານ ປະຈຳປີ 2019**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ " ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ ແລະ ລາຍງານປະຈຳປີຂອງບໍລິສັດ " ໂດຍລາຍງານຜົນບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019 ແມ່ນມີລາຍລະອຽດໃນເອກະສານຄັດຕິດ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ ແລະ ລາຍງານປະຈຳປີຂອງບໍລິສັດ ປະຈຳປີ 2019 ຊຶ່ງໄດ້ຜ່ານການພິຈາລະນາຂອງສະພາບໍລິຫານແລ້ວ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 3** **ພິຈາລະນາຮັບຮອງເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2019**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ " ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາເອກະສານລາຍງານການເງິນຂອງ ບໍລິສັດ " ໂດຍເອກະສານລາຍງານການເງິນ ປະຈຳປີ 2019 ແມ່ນມີລາຍລະອຽດໃນເອກະສານຄັດຕິດ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2019 ຊຶ່ງໄດ້ຜ່ານການພິຈາລະນາຂອງສະພາບໍລິຫານ ແລະ ຜ່ານການກວດສອບຈາກຜູ້ກວດສອບບັນຊີພາຍນອກແລ້ວ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 4** **ພິຈາລະນາອະນຸມັດແນວທາງການຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການຕາມແຜນການດຳເນີນງານ ປະຈຳປີ 2020**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ອີງຕາມແຜນທຸລະກິດຂອງບໍລິສັດ ສຳລັບປີ 2020 ເຊິ່ງບໍລິສັດຕ້ອງການຂະຫຍາຍທຸລະກິດ ດັ່ງນັ້ນ ບໍລິສັດຈຶ່ງຕ້ອງການສິນເຊື່ອໃຫມ່ ປະມານ 9.000 ລ້ານກີບ

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

**ຄຳເຫັນຂອງສະພາບໍລິຫານ:**

ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາລາຍງານແຜນການດຳເນີນງານ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນ ຂອງບໍລິສັດ ປະຈຳປີ 2020 ຊຶ່ງໄດ້ຜ່ານການພິຈາລະນາຂອງສະພາບໍລິຫານແລ້ວ

**ຄະແນນສຽງທີ່ຕ້ອງໃຊ້:**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 5 ພິຈາລະນາ ແລະ ອະນຸມັດການຈັດສັນຫາກຳໄລສຸດທິປີ 2019 ແລະ ວິທີແບ່ງເງິນປັນຜົນ**

**ວັດຖຸປະສົງ ແລະ ເຫດຜົນ:**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ155 ກຳນົດໃຫ້" ການແບ່ງເງິນ ປັນຜົນໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຫຸ້ນ "

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ156 ບໍລິສັດຕ້ອງໄດ້ຈັດສັນ ກຳໄລສຸດທິປະຈຳປີ ເປັນເງິນສຳຮອງທຸກປີໃນອັດຕາ 10 ສ່ວນຮ້ອຍ ເມື່ອກອງທຶນສຳຮອງສະສົມເຄິ່ງໜຶ່ງຂອງທຶນຈົດທະ ບຽນ ບໍລິສັດອາດຈະໂຈະການຫັກເງິນດັ່ງກ່າວ

**ຄຳເຫັນຂອງສະພາບໍລິຫານ:**

ເຫັນດີທີ່ຈະຈ່າຍເງິນປັນຜົນ ໃນອັດຕາ 10 ສ່ວນຮ້ອຍຂອງກຳໄລສຸກທິ ເພື່ອເປັນທຶນສຳຮອງ ແລະ ຕົກລົງຈ່າຍເງິນປັນຜົນ ຈາກຜົນການດ□ເນີນງານປີ2019 ຕາມລາຍລະອຽດດັ່ງນີ້:

1. ແຈກຈ່າຍໃຫ້ກັບກອງທຶນສຳຮອງ: 808,498,495ກີບ ຫຼື 10.0 ສ່ວນຮ້ອຍຂອງກຳໄລສຸດທິ
2. ສະສົມເພື່ອການຂະຫຍາຍທຸລະກິດ: 3,276,486,456ກີບ ຫຼື 40.53 ສ່ວນຮ້ອຍຂອງກຳໄລສຸດທິ
3. ແຈກຈ່າຍເພື່ອຈ່າຍເງິນປັນຜົນ: 4,000,000,000ກີບ ຫຼື 49.47 ສ່ວນຮ້ອຍຂອງກຳໄລສຸດທິເຊິ່ງເທົ່າກັບ 100 ຕໍ່ຫຸ້ນ

- ກຳນົດມື້ປິດປຶ້ມບັນຊີຫະບຽນຜູ້ຖືຄອງຫຸ້ນເພື່ອຮັບສິດໄດ້ຮັບເງິນປັນຜົນໃນວັນທີ 27 ມີນາ 2020
- ກຳນົດຈ່າຍເງິນປັນຜົນພາຍໃນ 30 ວັນ ຫຼັງຈາກໄດ້ຮັບອະນຸມັດຈາກກອງປະຊຸມສາມັນຜູ້ຖືຫຸ້ນ

**ຄະແນນສຽງທີ່ຕ້ອງໃຊ້:**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 6 ພິຈາລະນາອະນຸມັດແຜນການດຳເນີນງານ, ເງິນເດືອນພະນັກງານ ແລະ ງົບປະມານການລົງທຶນຂອງບໍລິສັດ ສຳລັບປີ 2020**

**ວັດຖຸປະສົງ ແລະ ເຫດຜົນ:**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ " ກອງປະ ຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາແຜນການດຳເນີນງານ, ເງິນເດືອນຂອງພະນັກງານ ແລະ ງົບລົງ ທຶນຂອງບໍລິສັດ ສຳລັບປີ 2020 ລາຍລະອຽດເພີ່ມເຕີມແມ່ນຢູ່ໃນເອກະສານຄັດຕິດ

**ຄຳເຫັນຂອງສະພາບໍລິຫານ:**

ເຫັນວ່າຜູ້ຖືຫຸ້ນຄວນອະນຸມັດແຜນການດຳເນີນງານ, ເງິນເດືອນຂອງພະນັກງານ ແລະ ງົບປະມານລົງທຶນຂອງບໍລິສັດ ສຳ ລັບປີ 2020

**ຄະແນນສຽງທີ່ຕ້ອງໃຊ້:**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

**ວາລະທີ 7** **ພິຈາລະນາແຕ່ງຕັ້ງຜູ່ອຳນວຍການຄົນໃໝ່ ດຳລົງຕຳແໜ່ງແທນຄົນປະຈຸບັນຜູ້ທີ່ຈະສິ້ນສຸດລົງ**

**<u>ວັດຖຸປະສົງ ແລະ ເຫດຜົນ</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ມາຕາ 123, 124 ແລະ 125 ທີ່ກ່ຽວຂ້ອງ " ການແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ອຳນວຍການ, ວິທີການລົງຄະແນນສຽງສຳລັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຂອງຜູ້ອຳນວຍການ ແລະ ວາລະການດຳລົງຕຳແໜ່ງກຳມະການ " ກອງປະຊຸມແມ່ນເປັນຜູ້ແຕ່ງຕັ້ງຜູ່ອຳນວຍການຂອງບໍລິສັດ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າຄວນແຕ່ງຕັ້ງຕາມລາຍຊື່ລຸ່ມນີ້ ເປັນຜູ່ອຳນວຍການຂອງບໍລິສັດ ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 25 ເມສາ 2020 ແລະ ຜູ່ອຳນວຍການບໍລິສັດມີອາຍຸການ 2 ປີ ແລະ ສາມາດແຕ່ງຕັ້ງໃຫມ່ໄດ້

1. ທ່ານ ຊາຄິດ ນັກສອນ
2. ທ່ານນາງ ອິນທະວິໄລ ອຸດົມ
3. ທ່ານ ມານົບ ຕຣີລິດວິໄລ
4. ທ່ານນາງ ປຣາດຖະໜາ ນັກສອນ
5. ທ່ານນາງ ສຸດທິດາ ນັກສອນ
6. ທ່ານ ກຽງໄກ ນິດສະຍັນ
7. ທ່ານ ນັນທະພັດ ງາມປລັ່ງ
8. ທ່ານ ທິຣະເມດ ອຸດທິພັດພິບູນ
9. ທ່ານ ວິນຍູ ຈີລະປະພາການ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

**ວາລະທີ 8** **ພິຈາລະນາອະນຸມັດກຳນົດເບ້ຍປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2020**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 155 ກ່ຽວກັບ ຄ່າຕອບແທນສຳລັບຜູ່ອຳນວຍການຂອງບໍລິສັດ ແລະ ເງິນເດືອນຂອງຜູ່ອຳນວຍການບໍລິຫານຄວນໄດ້ຮັບການແຕ່ງຕັ້ງໂດຍກອງປະຊຸມຜູ່ຖືຫຸ້ນ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າຄວນອະນຸມັດອະນຸມັດກຳນົດເບ້ຍປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ຊຶ່ງໄດ້ຮັບການພິຈາລະນາຈາກສະພາບໍລິຫານ ແລະ ຄະນະກຳມະການກຳນົດຜົນຕອບແທນແລ້ວ ໂດຍມີລາຍລະອຽດ ດັ່ງນີ້:

1. ໃຫ້ເງິນເດືອນແກ່ຜູ່ອຳນວຍການທັງໝົດ ເພື່ອກຳນົດທິດທາງ ແລະ ນະໂຍບາຍຂອງບໍລິສັດ ແລະ ຕິດຕາມການກວດກາການປະຕິບັດງານຂອງບໍລິສັດດັ່ງຕໍ່ໄປນີ້
    a. ຜູ້ອຳນວຍການທີ່ເຮັດໜ້າທີ່ເປັນປະທານສະພາບໍລິຫານ ອັດຕາ 11,250,000 ກີບຕໍ່ເດືອນຕໍ່ທ່ານ
    b. ຜູ້ອຳນວຍການທີ່ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານ ອັດຕາ 6,250,000 ກີບຕໍ່ເດືອນຕໍ່ທ່ານ
2. ຄ່າເບ້ຍປະຊຸມ ເພື່ອເປັນຄ່າຕອບແທນການເດີນທາງມາເຂົ້າຮ່ວມປະຊຸມໃນແຕ່ລະຄັ້ງ
    a. ສຳລັບການປະຊຸມສະພາບໍລິຫານ ເປັນດັ່ງນີ້
        i. ຜູ້ເຮັດໜ້າທີ່ປະທານສະພາບໍລິຫານ ອັດຕາ 2,500,000 ກີບ ຕໍ່ຄັ້ງຕໍ່ທ່ານ
        ii. ຜູ້ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານ ອັດຕາ 1,500,000 ກີບ ຕໍ່ຄັ້ງຕໍ່ທ່ານ
    b. ສຳລັບການປະຊຸມຄະນະກຳມະການຊຸດຍ່ອຍ ທັງ 5 ຊຸດ
        i. ຜູ້ເຮັດໜ້າທີ່ປະທານສະພາບໍລິຫານ ອັດຕາ 1,500,000 ກີບ ຕໍ່ຄັ້ງຕໍ່ທ່ານ
        ii. ຜູ້ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານ ອັດຕາ 1,000,000 ກີບ ຕໍ່ຄັ້ງຕໍ່ທ່ານ

3. ຄ່າເບ້ຍປະຈຳປີ ສຳລັບສະມາຊິກສະພາບໍລິຫານທຸກທ່ານ ກຳນົດນະໂຍບາຍຂອງບໍລິສັດ ແລະ ຕິດຕາມການຄຸ້ມຄອງ ການດຳເນີນງານຂອງບໍລິສັດ. ສະນັ້ນເງິນໂບນັດປະຈຳປີຂອງສະພາບໍລິຫານຄວນກຳນົດໃຫ້ກ່ຽວຂ້ອງກັບການຄາດ ຄະເນກຳໄລສຸດທິປະຈຳປີ 2020 ເຊິ່ງເທົ່າກັບ 3 ສ່ວນຮ້ອຍຈາກກຳໄລສຸດທິຫຼັງຈາກຈ່າຍພາສີ ເຊິ່ງຈະພິຈາລະນາ ເພີ່ມຂຶ້ນ ຫຼື ຫຼຸດລົງຕາມຜົນງານຕົວຈິງ

ຄ່າຕອບແທນທີ່ໄດ້ກ່າວມາຂ້າງເທິງນີ້ບໍ່ໄດ້ລວມເອົາເງິນເດືອນ,ເງິນບຳນານແລະຜົນປະໂຫຍດອື່ນໆຂອງ ຜູ້ອຳນວຍການບໍລິຫານ, ເຊິ່ງປະຕິບັດໜ້າທີ່ໃນການເຮັດວຽກປະຈຳວັນ.

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າ ຮ່ວມກອງປະຊຸມ

**ວາລະທີ 9 ພິຈາລະນາແຕ່ງຕັ້ງຜູ່ກວດບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດບັນຊີ ປະຈຳປີ 2020**

**<u>ວັດຖຸປະສົງ ແລະ ເຫດຜົນ</u>**

ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ " ກອງ ປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດ ສອບບັນຊີ ປະຈຳປີ "

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າຄວນແຕ່ງຕັ້ງ ບໍລິສັດ ດີລອຍທ໌ ( ລາວ ) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີປະຈຳປີ 2020 ແລະ ກຳນົດຄ່າ ຕອບແທນເປັນເງິນ 32,500 ໂດລາສະຫາລັດ ເພາະວ່າ ບໍລິສັດ ດີລອຍທ໌ ( ລາວ ) ຈຳກັດຜູ້ດຽວ ມີຄວາມເຂົ້າໃຈກ່ຽວກັບ ທຸລະກິດເຊົ່າສິນເຊື່ອເປັນຢ່າງດີ ແລະ ມີການກະກຽມການປັບປ່ຽນບັນຊີເຂົ້າສູ່ມາດຕະຖານ IFRS ( ມາດຕະຖານລາຍງານ ການເງິນສາກົນ )

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມ ກອງປະຊຸມ

**ວາລະທີ 10 ພິຈາລະນາເລື່ອງອື່ນໆ (ຖ້າມີຜູ້ສະເໜີເພີ່ມເຕີມ)**

ວາລະກອງປະຊຸມ ແລະ ຄຳເຫັນຂອງສະພາບໍລິຫານດັ່ງກ່າວຂ້າງຕົ້ນນັ້ນ ສະມາຊິກສະພາບໍລິຫານອິດສະຫຼະບໍ່ມີຄຳເຫັນ ເປັນຢ່າງອື່ນສຳລັບກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2020 ທາງບໍລິສັດຈະເຊີນສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ , ຕະຫຼາດຫຼັກຊັບລາວ, ຜູ້ກວດສອບບັນຊີພາຍນອກ ແລະ ແຕ່ງຕັ້ງຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ ແລະ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເພື່ອເປັນສັກຂີພະຍານ ແລະ ຊ່ວຍດູ ແລກວດສອບໃຫ້ກອງປະຊຸມເປັນໄປຢ່າງຖືກຕ້ອງ, ໂປ່ງໃສ ຕາມລະບຽບກົດ ໝາຍທີ່ກ່ຽວຂ້ອງ